This translation is out of date. You are encouraged to distribute the up-to-date English-language version at the same time as the outdated translation.
To access descriptions of changes of outdated VISs, go to **www.immunize.org/vis**.

# ຢາວັກຊີນກັນພຍາດ
# ໄຂ້ອອກໝາກປ່ານ, ໄຂ້ຕ່ອມຄາງໃຄ່,ແລະໄຂ້ອອກໝາກແດງ
# MEASLES, MUMPS & RUBELLA VACCINES

## ສິ່ງທີ່ທ່ານຕ້ອງຮູ້

### 1 ດ້ວຍເຫດໃດຈຶ່ງໃຊ້ຢາວັກຊີນປ້ອງກັນ?

**ໄຂ້ອອກໝາກປ່ານ (Measles), ໄຂ້ຕ່ອມນໍ້າລາຍຕຶ່ງ (Mumps) ແລະ ໄຂ້ອອກຕຸ່ມແດງ (Rubella) ແມ່ນພຍາດກັນດານ.**

**ໄຂ້ອອກໝາກປ່ານແດງ (Measles)**
- ແມ່ວາຍຣັສຂອງພຍາດພາໃຫ້ອອກໝາກພືດຂຶ້ນທົ່ວພືວໜັງ, ໄອ, ມູກຍ້ອຍ, ຄັນຕາ, ແລະຄີງຮ້ອນ.
- ມັນອາດພາໃຫ້ຫູອັກເສບ, ປອດບວມ, ເປັນຊັກ (ຕົນ ຕົວແກ່ວງໄກວໄປມາ, ຕາກົ້ງຢູ່), ສມອງເສັຽຫາຍແລະ ຕາຍ.

**ໄຂ້ຄາງບູມຫຼືຕ່ອມຄາງໄຄ່(Mumps)**
- ແມ່ວາຍຣັສມຸ້ມ (Mumps) ພາໃຫ້ຄີງຮ້ອນ, ເຈັບຫົວ, ຕ່ອມນໍ້າລາຍໄຄ່.
- ມັນອາດພາໃຫ້ຫູໜວກ, ເຍື່ອຫຸ້ມໜ່ວຽສມອງອັກ ເສບ(ແມ່ພຍາດເຂົ້າໄປຫາເຍື່ອຫຸ້ມໜ່ວຍແລະກ້ານຂມອງ), ໄຂ່ຫຳຫຼືພວງໄຂ່ຕຶງແລະເຈັບແລ້ວຕາຍ. ແຕ່ວ່ານ້ອຍໜັກນ້ອຍໜາ.

**ໄຂ້ອອກໝາກແດງ (Rubella) ຫຼືອອກໝາກເຢັຽຣະມັນ (German Measles)**
- ແມ່ວາຍຣັສຣູແບວລາພາໃຫ້ເກີດອອກໝາກພືດຂຶ້ນ ທົ່ວພືວໜັງ, ຄີງຮ້ອນເລັກນ້ອຍແລະປວດຂໍ່ (ສ່ວນມາກກັບຜູ້ຍີງ).
- ກ້າຜູ້ຍີງກຳລັງມີທ້ອງຕິດພຍາດນີ້ນາງອາດຈະຫຼຸລູກຫຼືມີ ລູກເກີດມາພິການໜັກ.

ທ່ານຫຼືລູກຂອງທ່ານຕິດພຍາດເລົ່ານີ້ໄດ້ໂດຽຢູ່ໃກ້ກັດຜູ້ກຳລັງເປັນພຍາດນີ້. ພຍາດເຫຼົ່ານີ້ຕິດຕໍ່ກັນທາງອາກາດ.

ຢາວັກຊີນຕ້ານພຍາດໄຂ້ອອກໝາກປ່ານ(Measles), ໄຂ້ຕ່ອມຄາງໄຄ (mumps) ແລະໄຂ້ອອກໝາກແດງ (rubella) ທັງສາມອັນນີ້ເອີ້ນວ່າ ມມຣ (MMR) ສາມາດປ້ອງກັນເຮົາບໍ່ໃຫ້ຕິດພຍາດເລົ່ານີ້.

### 2 ຜູ້ໃດຈະຮັບເອົາຢາວັກຊີນ ມມຣ(MMR)ແລະເວລາໃດ?

**ເດັກນ້ອຍຕ້ອງ**ໄດ້ຮັບຢາວັກຊີນ MMR 2 ຂນານ:

✔ ຂນານທີ່ນຶ່ງເວລາອາຍຸໄດ້ **12 -15 ເດືອນ.**
✔ ຂນານທີ່ສອງເວລາອາຍຸໄດ້ **4 - 6 ປີ.**



ອັນນີ້ແມ່ນອາຍຸຖືກຕ້ອງ,ແຕ່ວ່າເດັກນ້ອຍອາດຮັບເອົາເຂັມທີ່ສອງຍາມໃດກໍໄດ້ຂໍແຕ່ວ່າມັນຫ່າງກັນ 28 ວັນຈາກຂນານທີ່ນຶ່ງ.

**ຜູ້ໃຫ່ຍ**ບາງຄົນກໍຄວນໄດ້ຮັບຢາວັກຊີນ MMR :
ໂດຽທົ່ວໄປ, ຜູ້ທີ່ມີອາຍຸໄດ້ 18 ປີຫຼືແກ່ກວາ, ຊຶ່ງເກີດຫລັງຈາກ1956, ຕ້ອງໄດ້ຮັບຢ່າງນ້ອຽນຶ່ງຂນານ, ກ້າບໍ່ດັ່ງນັ້ນເຂົາເຈົ້າກໍຕ້ອງສແດງຫຼັກການວ່າເຂົາເຄີຍໄດ້ຮັບຢາວັກຊີນແລ້ວຫຼືເຄີຍຜ່ານການເປັນພຍາດມາແລ້ວ.

ຈົ່ງການເອົາລາຍລະອຽດນຳທ່ານໝໍຂອງທ່ານຫຼືຜູ້ພຍາບານ.

ຢາວັກຊີນ MMR ເອົາໃຫ້ພ້ອມກັບຢາວັກຊີນອື່ນກໍໄດ້.

### 3 ຄົນບາງຈຳພວກຮັບຢາວັກຊີນ MMR ນີ້ ບໍ່ໄດ້ຫຼືຕ້ອງໂຈະໄວ້ຊົ່ວຄາວ

- ຜູ້ທີ່ຮັບເອົາຢາວັກຊີນ MMR ບໍ່ໄດ້ແມ່ນຜູ້ທີ່ເຄີຍ ປ່ວຍລົງຍ້ອນກະທົບແພ້ຢາຈຳພວກ **ທາດກາວ (gelatine)** , ຢາຕ້ານເຊື້ອໂຣກ**ເນັຽໄມຊີນ (neomycin)** ຫຼື **ຢາວັກຊີນ MMR ຂນານກ່ອນ.**

- ຜູ້ທີ່ບໍ່ສະບາຍປານກາງຫຼືໜັກໃນຊ່ວງເວລາທີ່ຕົນຕ້ອງສັກຢາກັນກໍຕ້ອງລໍ່ຖ້າໄປກ່ອນຈົນກວ່າຫາຍດີແລ້ວຈຶ່ງຮັບເອົາຢາວັກຊີນນີ້ (MMR).

- ຜູ້ຍີງກືພາກໍຕ້ອງລໍ່ຖ້າຈົນອອກລູກຮຽບຮ້ອຍແລ້ວຈຶ່ງ ຮັບຢາວັກຊີນໄດ້. ບໍ່ໃຫ້ຜູ້ຍີງກືພາລະຍະ3ເດືອນຫຼັງຈາກໄດ້ຮັບຢາວັກຊີນMMR ແລ້ວ.

- ຄົນຈຳພວກນີ້ງຕ້ອງການໝໍຂອງຕົນກ່ອນວ່າເຂົາເຈົ້າ ຮັບຢາວັກຊີນ MMR ນີ້ໄດ້ບໍ່?, ໃນນັ້ນກໍມີ:
  - ຜູ້ຕິດເຊື້ອວາຍຣັສເຮຈໄອວີ (HIV) ຜູ້ເປັນໂຣຄ ເອດສ (AIDS) ຫຼືເປັນພຍາດທີ່ກະທົບຣະບົບ ຕ້ານທານພຍາດຂອງຮາງກາຍ.
  - ຜູ້ທີ່ກຳລັງຮັບການປົວດ້ວຽຢາທີ່ກະທົບຣະບົບ ຕ້ານທານຂອງຮ່າງກາຍໃນລະຍະ 2 ອາທິດຫຼື ລື່ນນັ້ນ.
  - ເປັນໂຣຄມາເຮັງຊນິດໃດຊນິດນຶ່ງ.
  - ກຳລັງຮັບຢາຫຼືສາຍແສງຣັງສີ (x rays).
  - ບໍ່ຣິມາດເມັດເລືອດແປ (platelet) ຕໍ່າ (ພຍາດ ເລືອດກ້ານ).

• ຜູ້ທີ່ຖືກຕື່ມເລືອດຫຼືໄດ້ຮັບສິ່ງກັ່ນມາຈາກເລືອດກໍ່ຕ້ອງ ຖາມທ່ານໝໍວ່າ ຍາມໃດຕົນຈະຮັບເອົາຢາວັກຊີນ MMR ໄດ້.

ຈົ່ງຖາມເອົາລາຍລະອຽດກັບທ່ານໝໍຫຼືຜູ້ພະຍາບານເພື່ອຄວາມກະຈ່າງແຈ້ງ.

## 4 ຄວາມກັນດານເນື່ອງມາຈາກຢາວັກຊີນມີMMR ມີຫຍັງແດ່?

ຢາວັກຊີນ, ກໍ່ຄືຢາຊະນິດອື່ນ, ສາມາດເປັນສາຍເຫດໃຫ້ແກ່ບັນຫາຍຸ້ງຍາກ, ຕົວຢ່າງຈາກການກະທົບແພ້ຢາ. ຄວາມອາດເກີດບັນຫາໜັກຫຼືເຖິງແກ່ຊີວິດແມ່ນຕ່ຳທີ່ສຸດ.

ຖືກໃສ່ຢາວັກຊີນມີຄວາມປອດໄພຫຼາຍກ່ວາຖືກເລົ້າພຍາດທັງສາມນັ້ນເຂົ້າ.

ເກືອບໝົດທຸກຄົນທີ່ໄດ້ຮັບຢາວັກຊີນ MMR ບໍ່ເຫັນມີບັນຫາຫຍັງເກີດຂຶ້ນ.

**ບັນຫາເລັກນ້ອຍ**
• ຄິງຮ້ອນ (1ຄົນຕໍ່ 6)
• ອອກຕຸ່ມ (2 ຄົນຕໍ່ 20)
• ຕ່ອມໃຄ່ຂຶ້ນຢູ່ແກ້ມແລະຄໍ (ບໍ່ສູ້ມີ)
ຖ້າມີບັນຫາດັ່ງກ່າວນີ້, ມັນຈະເກີດຂຶ້ນພາຍໃນ 7-12 ວັນຫຼັງຈັກສັກຢາແລ້ວ. ມັນຍິ່ງມີນ້ອຍສຳລັບຂນານທີ່ ສອງ.

**ບັນຫາປານກາງ**
• ເປັນຊັກ(ຕົນຕົວແກວ່ງໄກວໄປມາ ຕາກັ້ງເນື່ອງຈາກໄຂ້ຂຶ້ນສູງ (ມີໃນຣະວ່າງ1 ຕໍ່ 3,000 ຂນານ).
• ປວດແລະຂັດຕາມຂໍ່ໂດຍສະເພາະເປັນນຳເດັກໜຸ່ມຫຼືຜູ້ ໃຫ່ຍເພດຍິງ (ເຖິງ 1ຕໍ່4).
• ເມັດເລືອດແປຈາງເປັນເວລາຊົ່ວຄາວອັນອາດເປັນ ເຫດໃຫ້ເປັນພຍາດເລືອດບໍ່ກ້າມດີ(1ຕໍ່ 30,000 ຂນານ).

**ບັນຫາໜັກ(ບໍ່ສູ້ມີ)**
• ອາການກະທົບແພ້ຢາ(ນອ້ຽກ່ວາ 1ຕໍ່ລ້ານຂນານ).
• ມີຫລາຽບັນຫາທີ່ເດັກໄດ້ສແດງອອກມາຫລັງຈາກໄດ້ ຮັບຢາວັກຊີນແຕ່ວ່າອັນນີ້ກໍ່ມີນ້ອຍ, ແລະຜູ້ຊ່ຽວຊານກໍ່ ບໍ່ແນ່ໃຈວ່າມັນແມ່ນຢາວັກຊີນນີ້ເປັນສາຍເຫດຫຼືບໍ່ໃນນັ້ນມີ:
- ຫູໜວກ.
- ເປັນຊັກບ້າໝູ, ນອນສລົບ, ຫລືສະຕິປູ້.
- ສມອງເສັຽຫາຍຕລອດໄປ.

## 5 ຖ້າພົບກັບບັນຫາປານກາງຫຼືໜັກຈະເຮັດແນວໃດ?

**ເຮົາຈະເຫັນຫຽັງ?**

ສະພາບຜິດປົກກະຕິອັນໃດອັນນຶ່ງ, ເຊັ່ນກະທົບແພ້ຢາໜັກ, ໄຂ້ສູງ, ການປະພຶດປ່ຽນແປງ. ອາການຂອງການກະທົບແພ້ຢາແຮງກໍ່ມີຄືຫັນໃຈຝືດ, ສຽງແຫບຫຼືສຽງຫັນໃຈດັງຫອດແຫດ, ອອກມື້ນມ່ານ, ສີໜ້າຈືດລົງ, ອ່ອນເພັຽ, ຫົວໃຈເຕັ້ນກຶ່ຫຼືວິນວຽນສອງສາມຊົ່ວໂມງຫຼັງຈາກສີດຢາແລ້ວ. ໄຂ້ສູງແລະຊັກ, ຖ້າມີ, ກໍ່ຈະເກີດຂຶ້ນ1ຫາ2 ອາທິດຫຼັງຈາກສັກຢາ.

**ເຮົາຈະເຮັດຫຽັງ?**

• ຮ້ອງທ່ານໝໍມາເບິ່ງຫຼືພາໄປຫາໝໍທັນທີ.
• ເລົ່າໃຫ້ທ່ານໝໍຟັງເລື້ອງທີ່ເກີດຂຶ້ນ, ວັນເວລາເລີ້ມ ຕົ້ນ, ຍາມໃດທີ່ໄດ້ຮັບຢາວັກຊີນ.
• ຮ້ອງຂໍໃຫ້ທ່ານໝໍ, ຜູ້ພຍາບານ, ຫຼືພແນກສາທາຣະນະ ສຸກໃຫ້ຂຽນຟອມເຂົ້າລະບົບລາຍງານເຫດຮ້າຍ ເນື່ອງຈາກຢາວັກຊີນ (VAERS) ຫຼືໂທຫາ VAERS ໂດຽກົງທີ່ **1-800-822-7967**.

## 6 ໂຄງການແຫ່ງຊາດເພື່ອທົດແທນຄ່າ ເສັຽຮາຍເນື່ອງຈາກຢາວັກຊີນ

ໃນກໍ່ຣະນີທີ່ມີນ້ອຽໜັກນ້ອຍໝາທີ່ທ່ານຫຼືລູກຖືກບັນຫາໜັກຈາກຢາວັກຊີນໂຄງການແຫ່ງຊາດກໍ່ຈະຊ່ວຽທ່ານຈ່າຍຄ່າບົວຣະບັດ.

ເພື່ອລາຍລະອຽດກ່ຽວກັບໂຄງການແຫ່ງຊາດເພື່ອທົດແທນຄ່າເສັຽຫາຍເນື່ອງຈາກຢາວັກຊີນ ຈົ່ງໂທຣ.ຫາ **1-800-338-2382** ຫຼື ເປີດຍ້ຽມເບິ່ງຕາມ່າງຄອມພິວເຕີ້ທີ່ **http://www.hrsa.gov/bhpr/vicp/**

## 7 ເຮັດແນວໃດເຮົາຈະຮູ້ລະອຽດຂຶ້ນກວ່ານີ້?

• ຖາມທ່ານໝໍຂອງທ່ານຫຼືຜູ້ພຍາບານ. ເພິ່ນອາດຈະ ເອົາເອກສານເລື້ອງຢາວັກຊີນໃຫ້ອ່ານ ຫຼື ແນະ ນຳສາຍຂ່າວອື່ນ.
• ໂທຣ. ຖາມພະແນກສາທາຣະນະສຸກຂອງທ້ອງຖິ່ນຫຼື ຣັຖ ເຖິງເລື້ອງໂຄງການສັກຢາປ້ອງກັນພຍາດ.
• ຕິດຕໍ່ສູນກາງຄວບຄຸມແລະປ້ອງກັນພຍາດ(CDC):
  - ໂທຣ. **1-800-232-2522** (ພາສາອັງກິດ)
  - ໂທຣ. **1-800-232-0233** (ພາສາສະເປນ)
  - ສ່ອງຍ້ຽມຕາມ່າງຄອມພິວເຕີ້ເບິ່ງໂຄງການແຫ່ງຊາດກ່ຽວກັບສັກຢາປ້ອງກັນພຍາດທີ່ http:/www.cdc.gov/nip

**U.S. DEPARTMENT OF HEALTH & HUMAN SERVICES**
**Centers for Disease Control and Prevention**
**National Immunization Program**

Vaccine Information Statement
MMR (12/16/98) - Laotian 42 U.S.C. § 300aa26

Translation provided by the Minnesota Department of Health

IC # 1410121